# ການຂຽນກົດໝາຍ ເຊີງວິທະຍາສາດ SCIENTIFIC LEGAL WRITING

Dr. Perrine SIMON, Liaison Officer of the University of Luxembourg

Inter-University Project Laos-Luxembourg

UNIVERSITÉ DU LUXEMBOURG

# PART. 1: STRUCTURING A LAW PAPER

UNIVERSITÉ DU LUXEMBOURG

# ແຜນການ

1. ການຂຽນແບບວິຊາການແມ່ນຫຍັງ?
2. ຫຼັກການການຂຽນແບບວິຊາການ
3. ເລີ່ມຈາກໃສ?
4. ຫຼັກຂອງ IRAC
5. ໂຄງສ້າງຂອງບົດຄວາມວິຊາການ

\+ ຄຳຖາມ/ແບບຝຶກຫັດຫຼັງຈາກແຕ່ລະສ່ວນ

# I. ການຂຽນແບບວິຊາການແມ່ນຫຍັງ?

- ເປັນເຄື່ອງມືສຳຄັນທີ່ບັນດານັກວິໄຈໃຊ້ສື່ສານດ້ວຍກັນເອງ ແລະ ກັບບຸກຄົນອື່ນ
- ການຖ່າຍທອດແນວຄວາມຄິດທາງດ້ານກົດໝາຍ

ທ່ານຈະປະສົບຄວາມສຳເລັດເມື່ອເພື່ອນຮ່ວມງານຂອງທ່ານ **ເຂົ້າໃຈ** ຜົນງານຂອງທ່ານ ແລະ ນຳໃຊ້ມັນເພື່ອເປັນແຮງກະຕຸກຊຸກຍູ້ໃນການສ້າງຜົນງານຂອງພວກເຂົາ

ສ່ວນສຳຄັນຂອງຂະບວນການວິໄຈ

- ທັກສະໃນການປະຕິບັດຕົວຈິງຜ່ານປະສົບການ(ພາກປະຕິບັດ)

# I. ການຂຽນແບບວິຊາການແມ່ນຫຍັງ? ຈຸດປະສົງ (ຕົວຢ່າງ)

UNIVERSITÉ DU LUXEMBOURG

- ເພື່ອວິພາກວິຈານທິດສະດີ ຫຼື ຂໍ້ໂຕ້ແຍ່ງຈາກຜູ້ຂຽນຄົນອື່ນ

  Ex.: ບົດວິພາກທິດສະດີແຫ່ງກົດໝາຍຂອງ Ronald Dworkin

  Ex.: ການລະເມີດສິດທິຂັ້ນພື້ນຖານຂອງບໍລິສັດຢູ່ລາວ

- ເພື່ອສະແດງຄວາມຄິດເຫັນຕໍ່ຄຳຕັດສິນຂອງສານລ່າສຸດ

  Ex.: ລາວໂຮນດິ້ງ *N.V. ກັບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ* (ICSID ຄະດີເລກທີ. ARB(AF)/12/6)

- ເພື່ອແນະນຳໃຫ້ມີການປ່ຽນແປງໃນກົດໝາຍ

  Ex.: ກົດໝາຍວ່າດ້ວຍອາກອນລາຍໄດ້(ມາດຕາ 60) – ປ່ຽນຈາກອັດຕາອາກອນລາຍໄດ້ຫຼາຍກວ່າ 40 ລ້ານກີບ ຈາກ 24% ເປັນ 30%

## ເປັນຫຍັງເຮົາຈຶ່ງຕ້ອງຂຽນແບບວິຊາການ?



## ທ່ານຈະຂຽນບົດຄວາມກ່ຽວກັບຫຍັງ?

# II. ຫຼັກການຂອງການຂຽນແບບວິຊາການ

UNIVERSITÉ DU LUXEMBOURG

- ❑ **ຕ້ອງກະຈ່າງແຈ້ງ**

  ມັນເປັນໜ້າທີ່ຂອງຜູ້ຂຽນທີ່ຈະຕ້ອງເຮັດໃຫ້ຜູ້ອ່ານອ່ານໄດ້ງ່າຍ

- ❑ **ລຽບງ່າຍ**

  ຖ້າການຂຽນຂອງທ່ານຍິ່ງຊັບຊ້ອນຫຼາຍຂຶ້ນເທົ່າໃດ, ທ່ານຍິ່ງເບິ່ງສະຫຼາດຂຶ້ນຫຼາຍເທົ່ານັ້ນບໍ?

- ❑ **ກະທັດຮັດ**

  KISS: Keep It Short and Simple (ເຮັດໃຫ້ມັນສັ້ນກະທັດຮັດ ແລະເຂົ້າໃຈງ່າຍ

- ❑ **ວັດຖຸປະສົງ**

  ມັນເປັນຄວາມຄິດເຫັນຂອງທ່ານໂດຍອີງຕາມການຄົ້ນຄວ້າ

# III. ເລີ່ມຈາກໃສ?

“ວິທີທີ່ດີທີ່ສຸດໃນການເລີ່ມຕົ້ນ ຄືວິທີໃດກໍໄດ້ທີ່ເໝາະກັບທ່ານ.”*

- ການຂຽນເປັນໄປຕາມທຳມະຊາດ (ສ້າງສັນໃນຂະນະທີ່ຂຽນ)
- ການມີແບບແຜນ (ຈຸດປະສົງ/ຄຳຖາມ/ໂຄງສ້າງຂອງບົດຄວາມ)
- ເລີ່ມຕົ້ນການຂຽນໂດຍແນວຄວາມຄິດ ແຕ່ບໍ່ຈຳເປັນຕ້ອງມີແບບແຜນຊັດເຈນ
- ແຍກຂຽນເປັນສ່ວນ ແລ້ວຈຶ່ງມາໂຮມເຂົ້າກັນ

* Sword, H. (2017) *Air & light & time & space: How successful academics write*. London: Harvard University Press.

# III. ເລີ່ມຈາກໃສ?

- ຂຽນຢ່າງອິດສະຫຼະ
  - ຕັ້ງເວລາ (ຕົວຢ່າງ ກຳນົດເວລາຂຽນ 30 ນາທີ)
  - ປິດໂທລະສັບ ແລະ ສິ່ງລົບກວນຕ່າງໆ (TV…)
  - ຂຽນໄປເລື້ອຍໆ (ສິ່ງໃດກໍໄດ້ຕາມໃຈ)
  - ບໍ່ມີການວິຈານ! ບໍ່ທັນມີໃຜໄດ້ອ່ານ
- ແຜນທີ່ຄວາມຄິດ
  - ຂຽນຫົວຂໍ້ຫຼັກໆຢູ່ກາງເຈ້ຍ
  - ແຕ້ມເສັ້ນ ແລະ ເຊື່ອມໂຍງຄວາມຄິດທີ່ມີກ່ຽວຂ້ອງ
- ຄຳຖາມ
  - ຖາມຄຳຖາມກ່ຽວກັບຫົວຂໍ້ຂອງທ່ານ
  - ແມ່ນໃຜ? ແມ່ນຫຍັງ? ຢູ່ໃສ? ເມື່ອໃດ? ເປັນຫຍັງ? ແນວໃດ?

## ມາເຝິກສ້າງແບບແຜນທີ່ຄວາມຄິດກັນເຖາະ! (Mindmapping)

ຊອກຫາແນວຄິດທີ່ກ່ຽວຂ້ອງກັບ

**“ການຍຶດທີ່ດິນ”**



# ແຜນຜັງມະໂນທັດ



# IV. ຫຼັກຂອງ IRAC

Issue (ບັນຫາ) – ລະບຸບັນຫາທີ່ເຮົາຈະແກ້ໄຂ

Rule (ກົດລະບຽບ) – ກົດລະບຽບ/ກົດໝາຍທີ່ຄຸ້ມຄອງບັນຫານີ້ແມ່ນຫຍັງ?

Analysis (ວິເຄາະ) – ໃຫ້ເຫດຜົນວ່າເປັນຫຍັງກົດລະບຽບ/ກົດໝາຍຈຶ່ງໃຊ້ໄດ້ ຫຼື ບໍ່ໄດ້ຕໍ່ກັບຂໍ້ເທັດຈິງ

Conclusion (ສະຫຼຸບ) – ກົດລະບຽບ/ກົດໝາຍສາມາດໃຊ້ໄດ້ກັບຂໍ້ເທັດຈິງທີ່ກຳນົດໄວ້ ຫຼື ບໍ່

# IV. ຫຼັກຂອງ IRAC : ຕົ້ນເຫດຂອງບັນຫາ

ທ້າວ ອາເຊີ້ ຈ໋ອນ ກຳລັງດື່ມເບຍຢູ່ທີ່ງານປາຕີ້. ລາວຍ່າງຜ່ານທາງຍ່າງພ້ອມທັງຖືເບຍເຮັດເທ່ຍຊະຊາຍ. ລາວຍ່າງໄປຫ້ອງອາຫານ, ຈັບເອົາເຈ້ຍອະນາໄມ ແລ້ວເຫັນເພື່ອນຮ່ວມງານຂອງລາວຊື່ ຊີໂຣ ກຳລັງຈູບກັບ ລານາ ແຟນເກົ່າຂອງລາວຢູ່ ລາວຈຶ່ງເກີດຄວາມຫຶງຫວງ ແລະ ຊົກໄປທີ່ໜ້າຂອງຊີໂຣທີ່ບໍ່ທັນລະວັງຕົວ.

ໃນລະຫວ່າງນັ້ນ, ຜູ້ອຳນວຍການຝ່າຍຈັດການພະນັກງານ ຊື່ວ່າ ປາມ ໄດ້ຍິນສຽງດັງໂວຍວາຍ ຈຶ່ງຢາກຮູ້ວ່າແມ່ນຫຍັງທີ່ກຳລັງເກີດຂຶ້ນ. ໃນຂະນະທີ່ນາງກຳລັງຍ່າງຢ່າງຮີບດ່ວນໄປທີ່ຫ້ອງອາຫານບ່ອນເກີດເຫດນັ້ນ ນາງລົ້ມພະລາດເບຍຂອງທ້າວ ອາເຊີ້ ແລະ ເຮັດໃຫ້ຫົວເຂົ່າຂອງນາງເຈັບ.

ບັນຫາດ້ານກົດໝາຍມີຫຍັງແດ່(ຖ້າມີ)?

# IV. ຫຼັກຂອງ IRAC: ກົດລະບຽບ

“ການທຳຮ້າຍຮ່າງກາຍ ແມ່ນ ການກະທຳທີ່ເຮັດໃຫ້ຄົນອື່ນໄດ້ຮັບບາດເຈັບໂດຍເຈດຕະນາ ເປັນການກະທຳທີ່ເປັນອັນຕະລາຍຕໍ່ຮ່າງກາຍ ຫຼື ຈິດໃຈຂອງຜູ້ຖືກກະທຳນັ້ນ... ການເຂົ້າໃກ້ໂດຍເຮັດໃຫ້ເກີດຄວາມເປັນອັນຕະລາຍ ຫຼື ການຄຸກຄາມໂດຍການທຳຮ້າຍຮ່າງກາຍ A battery is an act with intent to commit a harmful or offensive contact ….or imminent apprehension of such contact…”

- ອົງປະກອບຂອງມັນແມ່ນຫຍັງ?
- ຂໍ້ຍົກເວັ້ນຂອງມັນແມ່ນຫຍັງ?

“ທ້າວ ອາເຊີ ຕີ ທ້າວ ຊີໂຣ ມັນແມ່ນການທຳຮ້າຍຮ່າງກາຍ ຫຼືບໍ່” – ມັນ

# IV. ຫຼັກ IRAC : ວິເຄາະ/ນຳໃຊ້

1. **ນຳໃຊ້ຫຼັກການນີ້ໃນຂໍ້ເທັດຈິງ** (ບັນຫາ)

- ອາເຊີ້ລາວໄດ້ກະທຳການໂດຍເຈດທະນາທີ່ເປັນການທຳຮ້າຍຮ່າງກາຍທີ່ເປັນອັນຕະລາຍ ຫຼື ບໍ? ຖ້າຫາກລາວເວົ້າວ່າບໍ່ເຈດຈະນາທີ່ກະທຳການທີ່ເປັນອັນຈະລາຍຕໍ່ຊີໂຣເດ?
- ມັນແມ່ນການກະທຳທີ່ເປັນອັນຕະລາຍ ຫຼື ການທຳຮ້າຍຮ່າງກາຍ ຫຼື ບໍ?
- ທ້າວຊີໂຣ ຢືນຢັນການຖືກຄຸກຄາມຈາກການທຳຮ້າຍຮ່າງກາຍນີ້ ຫຼື ບໍ?.

2. **ສົນທະນາຂໍ້ເທັດຈິງທັງສອງດ້ານ**

- ທ້າວອາເຊີຈະໂຕ້ແຍ່ງຫຍັງ (ຖ້າຫາກທ່ານເປັນນາງປາມ)?
- ລາວອາດຈະຊີ້ວ່າລາວກຳລັງຈະໄປເອົາເຈ້ຍອະນາໄມ ແລະ ນາງປາມໄດ້ຍ່າງມາເອງລະຫວ່າງນັ້ນ. ນາທີຕໍ່ມາລາວກໍໄປຢູ່ອີກຫ້ອງໜຶ່ງແລ້ວ
- ນາງປາມອາດໂຕ້ແຍ້ງວ່າ ທ້າວອາເຊີ້ຄວນເອົາສິ່ງມາວາງເຕືອນໃຫ້ທຸກຄົນລະວັງບໍລິເວນພື້ນທີ່ເບຍເທ່ຍໃສ່ນັ້ນ.
- ທ້າວອາເຊີອາດຈະໂຕ້ແຍ້ງກັບຄືນວ່າ ພື້ນບໍລິເວນທີ່ປຽກນັ້ນກໍ "ເປີດເຜີຍເຫັນຢ່າງຊັດເຈນ" ເຊິ່ງທຸກຄົນກໍຮູ້ວ່າມັນປຽກຢູ່.

# IV. ຫຼັກIRAC: ສະຫຼຸບ

UNIVERSITÉ DU LUXEMBOURG

- ຕັດສິນ (ເປັນ "ຜູ້ພິພາກສາ")
- ກົດລະບຽບ/ກົດໝາຍສາມາດນຳໃຊ້ໄດ້ກັບຂໍ້ເທັດຈິງໄດ້ ຫຼື ບໍ?
- ທ້າວອາເຊີ້ມີຄວາມຜິດສະຖານການທຳຮ້າຍຮ່າງກາຍ ຫຼື ບໍ?
- ທ້າວອາເຊີ້ມີຄວາມຮັບຜິດຊອບຕໍ່ນາງປາມໃນສະຖານປະມາດເລີ້ນເລີ ຫຼື ບໍ?
- ຕ່າງຝ່າຍຄວນທີ່ຈະເຮັດແນວໃດເພື່ອຫຼີກລ່ຽງບັນຫາທາງກົດໝາຍນີ້?

# V. ໂຄງສ້າງຂອງບົດວິຊາການ

1. ຊື່ເລື່ອງ
2. *ສາລະບານ*
3. *ບົດຄັດຫຍໍ້*
4. ພາກສະເໜີ
5. ປະຫວັດຄວາມເປັນມາ, ວິເຄາະບັນຫາ, ຜົນໄດ້ຮັບ, ສົນທະນາ
6. ສະຫຼຸບ
7. *ເອກະສານອ້າງອີງ/ບັນນານຸກົມ*
8. *ເອກະສານຊ້ອນທ້າຍ*

# V. ໂຄງສ້າງຂອງບົດວິຊາການ : ຊື່ເລື່ອງ

UNIVERSITÉ DU LUXEMBOURG

- ສັ້ນ (ຮັດກຸມ)
- ສະເພາະເຈາະຈົງ (ຄໍາສັບຫຼັກທີ່ສໍາຄັນ)
- ຈັບໃຈ (ຜູ້ອ່ານ)
  - "ບົດບາດຂອງກົດໝາຍໃນລັດແຫ່ງກົດໝາຍ: ການມີສ່ວນຮ່ວມຂອງນັກວິຊາການໃນສ.ປປ.ລາວ"
  - "ດໍາເນີນໄປຕາມການໄຫຼວຽນຂອງເງິນຕາ, ຖ້າຫາກທ່ານສາມາດເຮັດໄດ້ - ວິທີການແກ້ໄຂບັນຫາຂອບການຮ່ວມມື FIU ພາຍໃຕ້ກົດລະບຽບການປົກປ້ອງຂໍ້ມູນ"
  - "ການຄວບຄຸມອາຫານໃນລຸກຊໍາບວກ: ລະບົບການອະນຸມັດ?"
  - "ການລົງທຶນຕ່າງປະເທດ ແລະ ການປົກປ້ອງສິ່ງແວດລ້ອມ: ສຶກສາກໍລະນີຂອງລາວ"

# V. ໂຄງສ້າງຂອງບົດຄວາມວິຊາການ: ຕົວຢ່າງ

UNIVERSITÉ DU LUXEMBOURG

"ບົດບາດຂອງກົດໝາຍໃນລັດແຫ່ງກົດໝາຍ: ການມີສ່ວນຮ່ວມຂອງນັກວິຊາການໃນສ.ປປ.ລາວ"

1. ກຳນົດຂອບເຂດ: ການພັດທະນາລັດແຫ່ງກົດໝາຍໃນສ.ປປ.ລາວ
   1.1. ການພັດທະນາລັດແຫ່ງກົດໝາຍ
   1.2. ການປ່ຽນແປງຫຼັກຂອງລັດແຫ່ງກົດໝາຍຂອງລາວ
   1.3. ສະຖານະການຫຼັກຂອງລັດແຫ່ງກົດໝາຍຢູ່ລາວ
2. ການມີສ່ວນຮ່ວມໃນການສ້າງ "ໂຮງຮຽນກົດໝາຍ" ທີ່ກຳລັງດຳເນີນການຢູ່
   2.1. ການສຶກສາກົດໝາຍລະດັບອຸດົມສຶກສາ ແລະ ຊັ້ນສູງທີ່ມີຢູ່ໃນລາວ
   2.2. ການຮ່ວມມືທີ່ເປັນຮູບປະທຳລະຫວ່າງມະຫາວິທະຍາໄລ
3. ໂຕແປທາງວັດທະນະທຳ ແລະ ການເມືອງທີ່ຈຳກັດທືນການສຶກສາທາງດ້ານວິຊາການ
   3.1. ຂາດແຄນການເຂົ້າເຖິງແຫຼ່ງຂໍ້ມູນທາງກົດໝາຍ
   3.2. ຂາດແຄນການສະໜັບສະໜູນການຄົ້ນຄວ້າວິໄຈທາງກົດໝາຍ
   3.3. ວິທີການແກ້ໄຂຂອງລາວໃນຕໍ່ໜ້າ

# V. ໂຄງສ້າງຂອງບົດວິຊາການ : ຕົວຢ່າງ

## "ການລົງທຶນຕ່າງປະເທດ ແລະ ການປົກປ້ອງສິ່ງແວດລ້ອມ: ສຶກສາກໍລະນີຂອງລາວ"

1. ຄໍານໍາ
2. ລັກສະນະທົ່ວໄປ: ກົດໝາຍສາກົນກ່ຽວກັບການລົງທຶນສາກົນ ແລະ ການປົກປ້ອງສິ່ງແວດລ້ອມ
   - 2.1. ປະຫວັດຄວາມເປັນມາໂດຍສັງເຂບກ່ຽວກັບກົດໝາຍການລົງທຶນສາກົນ (IIL)
   - 2.2. ແນວໂນ້ມທີ່ຜ່ານມາກ່ຽວກັບການປົກປ້ອງສິ່ງແວດລ້ອມຂອງ IIL
3. ການປົກປ້ອງສິ່ງແວດລ້ອມ ແລະ ການລົງທຶນໂດຍກົງຂອຕ່າງປະເທດໃນລາວ
   - 3.1. ຂອບເຂດກົດໝາຍສາກົນ
   - 3.2. ຂອບເຂດກົດໝາຍພາຍໃນ
     - 3.2.1. ກົນໄກຂອງລາວໃນການສົ່ງເສີມການລົງທຶນ
     - 3.2.2. ກົນໄກຂອງລາວໃນການປົກປັກຮັກສາສິ່ງແວດລ້ອມ
4. ການວິເຄາະທີ່ສໍາຄັນໃນຂອບເຂດກົດໝາຍ
   - 4.1. ຂໍ້ບົກພ່ອງຂອງ IITs ທີ່ລາວໄດ້ລົງນາມ
   - 4.2. ຂໍ້ບົກພ່ອງ ແລະ ການບັງຄັບໃຊ້ກົດໝາຍພາຍໃນ
5. ສະຫຼຸບ ແລະ ຂໍ້ສະເໜີ

# PART. 2: STRUCTURING AN INTRODUCTION

uni.lu
UNIVERSITÉ DU LUXEMBOURG

# PLAN PART 2: INTRODUCTION - ແຜນການ

1. ຈຸດປະສົງຂອງບົດນຳ
2. ໂຄງສ້າງຂອງບົດນຳ
3. ສິ່ງທີ່ຄວນເອົາໄປໃຊ້ຈາກ Workshops

# I. ຈຸດປະສົງຂອງບົດນຳ

- ອະທິບາຍເຖິງບັນຫາທີ່ຈະໄດ້ຮັບການແກ້ໄຂ (ຂໍ້ມູນພື້ນຖານ)
- ເພື່ອກຳນົດວັດຖຸປະສົງຂອງຫົວຂໍ້
- ເພື່ອລະບຸເຖິງບັນຫາໃຫຍ່ຕໍ່ສິ່ງທີ່ທ່ານກຳລັງຫາວິທີແກ້ໄຂ

  Ex.: ການໃຊ້ແຮງງານເດັກຂອງບໍລິສັດຂ້າມຊາດໃນລາວ/ ການລ່ວງລະເມີດສິດທິມະນຸດຂອງບໍລິສັດໃນລາວ
- ເພື່ອໃຫ້ຜູ້ອ່ານສ້າງ "mental map" ໃນບົດຄວາມຂອງທ່ານ ເຂົາເຈົ້າຈຶ່ງສາມາດຮູ້ໄດ້ວ່າຈະຄາດຫວັງຫຍັງຈາກບົດຄວາມຂອງທ່ານ)
- ເພື່ອສ້າງຄວາມປະທັບໃຈທຳອິດ (ຜູ້ອ່ານໃຊ້ວິຈາລະນະຍານ)

# I. ຈຸດປະສົງຂອງບົດນຳ: ຕົວຢ່າງ

ຫຼັງຈາກປີ 1975 ລະບົບກົດໝາຍແມ່ນຢູ່ໃຕ້ການປົກຄອງຂອງລະບອບຄອມມູນິດ ແລະ ລາວກາຍເປັນປະເທດທີ່ບໍ່ມີລັດຖະທຳມະນູນ ແລະ ມີພຽງນິຕິກຳຈຳນວນໜ້ອຍ.

ນັບຕັ້ງແຕ່ປີ 1986 ກໍໄດ້ມີຄວາມພະຍາຍາມທີ່ຈະສ້າງລະບົບກົດໝານທີ່ທັນສະໄໝ ເພື່ອໃຫ້ແທດເໝາະກັບເສດຖະກິດຕະຫຼາດ. ເພື່ອເປັນການດຶງດູດການຄ້າຕ່າງປະເທດ ແລະ ເພື່ອຮ່ວມມືກັບປະເທດອື່ນ ພ້ອມທັງເປັນການສ້າງຄວາມເຊື່ອໝັ້ນໃນລະບົບຍຸຕິທຳຂອງຕົນເອງ. ດັ່ງນັ້ນ, ລາວຈຶ່ງມີແຜນການໃນການພັດທະນາລະບົບກົດໝາຍ.

ລັດຖະບານລາວກຳລັງສົ່ງເສີມການພັດທະນາປະເທດຢ່າງຕັ້ງໜ້າ ແລະ ໃນເວລາດຽວກັນກໍ່ຕ້ອງໄດ້ປະຕິຮູບ ແລະ ຮັບຮອງເອົາກົດໝາຍໃໝ່ຫຼາຍສະບັບເພື່ອຮັບມືກັບອາຊະຍາກຳ.

ລັດຖະບານໄດ້ປະກາດໃຊ້ກົດໝາຍຫຼາຍກວ່າ 40 ສະບັບເພື່ອຕ້ານກັບອາຊະຍາກຳ ເຊັ່ນວ່າ ລັດຖະທຳມະນູນ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ກົດໝາຍວ່າດ້ວຍສານປະຊາຊົນ. ດຳລັດວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, ກົດໝາຍວ່າດ້ວຍການລົງທຶນຂອງຕ່າງປະເທດ ແລະ ອື່ນໆ.

ສະພາຍການທ້ອງຖິ່ນຢູ່ໃນລາວຖືວ່າມີຄວາມສະເຖິຍລະພາບ ແຕ່ກໍ່ຍັງມີຫຼາຍຄະດີເກີດຂຶ້ນ ເຊັ່ນ ການລັກ,ການສໍ້ໂກງ,ການຍັກຍອກ ແລະ ການລະເມີດລະບຽບພາສີອາກອນຂອງລັດ ແລະ ອື່ນໆ ເຊິ່ງບັນຫາການສໍ້ລາດບັງຫຼວງເປັນບັນຫາສຳຄັນທີ່ລັດຖະບານລາວກຳລັງໃຫ້ຄວາມເອົາໃຈໃສ່

UNIVERSITÉ DU LUXEMBOURG

# II. ໂຄງສ້າງຂອງບົດນຳ



## 1. ການເປີດ

- ວັກ/ແຖວ ທຳອິດ ແມ່ນຂຶ້ນຕົ້ນດ້ວຍບັນຫາໂດຍລວມທີ່ບົດຄວາມເຮົາກຳນົດເປັນເປົ້າໝາຍ
- ບໍລິບົດແມ່ນຫຍັງ (context)?

## 2. ປະຫວັດຄວາມເປັນມາ

- ສິ່ງທີ່ເກີດຂຶ້ນກ່ອນໜ້ານີ້ມີຫຍັງແດ່?
- ຫົວຂໍ້ນີ້ເຄີຍຖືກຄົ້ນຄວ້າມາກ່ອນບໍ່? ຜົນຂອງການຄົ້ນຄວ້ານັ້ນເປັນແນວໃດ?

## 3. ສິ່ງທ້າທາຍ

- ການຕັ້ງສົມມຸດຖານ/ຄຳຖາມ/ເປົ້າໝາຍທີ່ສະເພາະເຈາະຈິງຂອງບົດຄວາມທີ່ຂຽນປັດຈຸບັນແມ່ນຫຍັງ?

# II. ໂຄງສ້າງຂອງບົດນຳ

UNIVERSITÉ DU LUXEMBOURG

ບັນຫາທີ່ໃຫຍ່
ກວ່າ

ຄຳຖາມທີ່
ສະເພາະເຈາະຈົງ

# III. ສິ່ງທີ່ຕ້ອງຖອດຖອນ (Takeaways) ຈາກການເຝິກອົບຮົມການຂຽນບົດຄວາມວິທະຍາສາດທາງກົດໝາຍ

UNIVERSITÉ DU LUXEMBOURG

ສິ່ງຫຼັກໆທີ່ທ່ານສາມາດຖອດຖອນໄດ້ຈາກສອງ workshops ນີ້ແມ່ນຫຍັງ?



# ຄຳຖາມ?

ຂອບໃຈສຳລັບການຮັບຟັງ!




Visit our website and follow our activities !

https://cooperationlaos.uni.lu/